# ການອົບຮົມເສີມສ້າງຄວາມເຂັ້ມແຂງ

# ສໍາລັບສະມາຄົມ, ອົງການຈັດຕັ້ງພາກສັງຄົມ ແລະບຸກຄົນທົ່ວໄປ

ໂດຍ

ສູນອົບຮົມຮ່ວມພັດທະນາ/ສູນຮຽນຮູ້ສວນໄມ້ລາວ








PADETC
THE HEART OF EDUCATION AND SUSTAINABLE DEVELOPMENT

SuanMaiLao
Holistic Education & Youth Development Center
A PADETC ORGANIZATION

SEM

## ກ້າວໄປດ້ວຍພື້ນຖານແຫ່ງການຮຽນຮູ້

ຂະນະທີ່ອົງການຈັດຕັ້ງພາກສັງຄົມຂອງລາວ(Non-Profit Association NPAs) ກຳລັງຂະຫຍາຍຕົວ ເປົ້າໝາຍຂອງແຕ່ລະອົງກອນກໍ່ແມ່ນເພື່ອການສ້າງສພັດທະນາປະເທດໃຫ້ຈະເລີນກ້າວໜ້າແບບຍືນຍົງ ແລະສ້າງໃຫ້ເກີດຄວາມເທົ່າທຽມກັນຢ່າງເປັນສຸກໃນສັງຄົມ ເປົ້າໝາຍດັ່ງກ່າວແມ່ນເພື່ອຜັນຂະຫຍາຍທິດທາງຂອງພັກ ແລະລັດໃຫ້ເກີດຜົນເປັນຈິງ. ໃນຂະນະທີ່ສັງຄົມມີການຂະຫຍາຍຕົວທາງດ້ານເສດຖະກິດ. ຄວາມທັນສະໄໝທາງເຕັກໂນໂລຊີທີ່ມີການພັດທະນາ ແລະປ່ຽນແປງຢ່າງໄວວາເຮັດໃຫ້ອົງການຈັດຕັ້ງພາກສັງຄົມຕ່າງໆຈຶ່ງໄດ້ໃຫ້ຄວາມສຳຄັນຕໍ່ການສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນດ້ວຍພື້ນຖານຂອງການຮຽນຮູ້ແບບອົງລວມເພື່ອພັດທະນາວຽກງານຂອງຕົນເອງໃຫ້ມີຄວາມເຂັ້ມແຂງ ແລະຍືນຍົງ.

ພື້ນຖານຂອງການຮຽນຮູ້ແບບອົງລວມຊ່ວຍໃຫ້ບຸກຄະລາກອນເກີດການຮຽນຮູ້ດ້ວຍຕົນເອງໂດຍຜ່ານການປະຕິບັດຕົວຈິງ ແລະສ້າງພື້ນຖານຄວາມຄິດໃນການຢາກທີ່ຈະພັດທະນາຕົນເອງ, ຢາກທີ່ຈະນຳໃຊ້ຄວາມຮູ້ຄວາມສາມາດ ແລະທັກສະຂອງຕົນເຂົ້າໃນການພັດທະນາວຽກງານຢ່າງໝັ້ນໃຈ ອີກທັງນຳຄວາມຮູ້ຄວາມເຂົ້າໃຈທີ່ກ້ວາງຂວາງຫຼາຍຂຶ້ນ ມີທັກສະທີ່ຊຳນານຂຶ້ນ ເຊື່ອມໃສ່ເຮັດໃຫ້ການພັດທະນາກ້າວໄປສູ່ລະບົບການບໍລິຫານງານທີ່ມີປະສິດທິພາບ ໂດຍສະເພາະແມ່ນໄດ້ເຂົ້າເຖິງຄວາມສຳຄັນຂອງການເຮັດວຽກທີ່ເຊື່ອມໂຍງໄປສູ່ຄວາມໝາຍຂອງຊີວິດແລະສັງຄົມທີ່ດີງາມ ອັນເປັນແຮງຈູງໃຈໃຫ້ມີໃຈຮັກຕໍ່ການສ້າງສັນວຽກງານໃຫ້ກ້າວໜ້າຕໍ່ໄປ. ດັ່ງນັ້ນທາງສູນຮຽນຮູ້ສອນໄມ້ລາວພາຍໃຕ້ການຊີ້ນຳຂອງສູນອົບຮົມຮ່ວມພັດທະນາ, ໂຄງການພຸດທະສາສະໜາເພື່ອການພັດທະນາ(ຄພພ) ແລະ ອົງການເສມສິຂາໄລ(SEM) ຈຶ່ງມີຄວາມຍິນດີເຊີນຊວນບັນດາທ່ານ, ອົງການຈັດຕັ້ງຕ່າງໆເຂົ້າຮ່ວມໃນ: **"ຊຸດເຝິກອົບຮົມເສີມສ້າງຄວາມເຂັ້ມແຂງຂອງສະມາຄົມ,ອົງການຈັດຕັ້ງພາກສັງຄົມ, ໄວໜຸ່ມ ແລະບຸກຄົນທົ່ວໄປ ເພື່ອການພັດທະນາແບບອົງລວມຂອງສັງຄົມລາວ"** ໂດຍມີມີລາຍລະອຽດຂອງການເຝິກລະບຸໄວ້ຂ້າງລຸ່ມນີ້.

## ຮູບແບບການຮຽນຮູ້ຂອງພວກເຮົາປະຈຳປີ 2014 ມີ 5 ຊຸດການອົບຮົມຄື:

## 1. ຊຸດເຝິກອົບຮົມການເປັນຄູເຝິກ ແບບມີສ່ວນຮ່ວມທີ່ເນັ້ນການຮຽນຮູ້ແບບອົງລວມ

### 1.1 ຊຸດຄູຝຶກຂັ້ນ 1.

ເໝາະກັບບຸກຄະລາກອນທີ່ມີບົດບາດທາງດ້ານການເຜີຍແຜ່ ສົ່ງເສີມຄວາມເຂົ້າໃຈຫຼືການຈັດເຝິກອົບຮົມໃນທຸກລະດັບ ໂດຍຜູ້ເຂົ້າຮ່ວມຕ້ອງສາມາດເຂົ້າອົບຮົມຕໍ່ເນື່ອງຈົນຈົບຫຼັກສູດ 3 ເນື້ອຫາວິຊາ.

| ລ/ດ | ຫົວຂໍ້ເຝິກອົບຮົມ | ວັນທີ,ເດືອນ,ປີ | ແນະນຳການເຝິກອົບຮົມ |
|---|---|---|---|
| 1 | ການເຮັດວຽກເປັນໝູ່ຄະນະ | 27-30 ມີນາ 2014 (4ມື້) | ພັດທະນາຕົນເອງເປັນຜູ້ປະຕິບັດງານແບບມີສ່ວນຮ່ວມ ດ້ວຍການຮຽນຮູ້ຈາກປະສົບການຈິງ ແລະການເຮັດວຽກເປັນໝູ່ຄະນະເພື່ອເສີມສ້າງທັກສະໃນການຟັງ ຄວາມເຂົ້າໃຈຂອງລັກສະນະນິໃສທີ່ແຕກຕ່າງ ຄວາມໄວ້ວາງໃຈຕໍ່ເພື່ອນຮ່ວມງານແລະການສ້າງພະລັງກຸ່ມໃນການຮຽນຮູ້ຮ່ວມກັນ. |
| 2 | ການດຳເນີນການສົນທະນາ | 22-25 ພຶດສະພາ 2014 (4ມື້) | ຮຽນຮູ້ການເປັນຜູ້ດຳເນີນການສົນທະນາແລະການອອກແບບກິດຈະກຳການຮຽນຮູ້ແບບມີສ່ວນຮ່ວມ ດ້ວຍການເຝິກທັກສະທີ່ຈຳເປັນເຊັ່ນ ການຮັບຟັງຢ່າງເລິກເຊິ່ງ ການຕັ້ງຄຳຖາມທີ່ມີພະລັງ ແລະຫລາກຫຼາຍ ການຈັບປະເດັນແລະເຊື່ອມໂຍງປະເດັນທີ່ໜ້າສົນໃຈ ແລະເຝິກນຳຂະບວນການຮຽນຮູ້ແບບຜ່ານປະສົບການຕົວຈິງ. |
| 3 | ການຈັດຂະບວນການເຝິກອົບຮົມແບບມີສ່ວນຮ່ວມ | 13-17 ສິງຫາ 2014 (5ມື້) | ຫຼໍ່ຫຼອມການເປັນຄູເຝິກ ດ້ວຍການເຝິກອອກແບບວິທີການທີ່ສ້າງສັນ ແລະເຝິກຝົນການດຳເນີນກະບວນການທີ່ສາມາດດຶງບົດຮຽນຜ່ານປະສົບການ ເຊື່ອມໂຍງສັກກະຍະພາບໄປສູ່ການພັດທະນາເພື່ອການປ່ຽນແປງ ແລະສ້າງຫົວໃຈແຫ່ງການຮຽນຮູ້ແບບອົງລວມ. |

*ວັນເວລາການອົບຮົມຢູ່ລະຫວ່າງການປະສານງານກັບວິທະຍາກອນຊຶ່ງອາດຈະມີການປ່ຽນແປງຕາມຄວາມເໝາະສົມ.*

### 1.2 ຊຸດຄູເຝິກຂັ້ນ 2.

ຊຸດອົບຮົມນີ້ແມ່ນເໝາະສຳລັບຜູ້ທີ່ເປັນຄູຝຶກຢູ່ແລ້ວ ແລະຫລືເຄີຍໄດ້ຜ່ານການອົບຮົມຄູຝຶກຂັ້ນນຶ່ງ ຂອງພວກເຮົາໃນປີຜ່ານມາ.ອີກນຶ່ງເງືອນໄຂຂອງຊຸດອົບຮົມນີ້ແມ່ນຕ້ອງໄດ້ຜ່ານການອົບຮົມການເຮັດວຽກເປັນໝູ່ຄະນະ(ການເຮັດວຽກເປັນຂອງສູນອົບຮົມຮ່ວມພັດທະນາ ຫລືເສມສິຂະໄລ)

| ລ/ດ | ຫົວຂໍ້ເຝິກອົບຮົມ | ວັນທີ,ເດືອນ,ປີ | ແນະນຳການເຝິກອົບຮົມ |
|---|---|---|---|
| 1 | ການອອກແບບຂະບວນການຮຽນຮູ້ທີເນັ້ນການປ່ຽນແປງຈາກພາຍໃນ | 24-27 ເມສາ 2014 (4ມື້) | ກິດຈະກຳທີ່ເຮົາໃຊ້ໃນຊຸດຝຶກອົບ,ປະຊຸມ,ສຳມະນາຫລືງານຕ່າງໆລ້ວນແລ້ວແຕ່ມີຄວາມໝາຍໃນຕົວຂອງມັນ ເຮົາຈະດຶງເອົາບົດຮຽນຫລືເນື້ອຫາອັນໃດອອກມາເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ເກີດການຮຽນຮູ້ເພື່ອກ້າວໄປຫາການປ່ຽນແປງທີ່ເປັນພື້ນຖານໃຫ້ກັບການເຮັດວຽກ ແລະການໃຊ້ຊີວິດປະຈຳວັນ. |
| 2 | ການອອກແບບຂະບວນການທີ່ເນັ້ນການເຂົ້າໃຈຊຸມຊົນ ແລະ | 25-28 ກັນຍາ 2014 (4ມື້) | ຊຸມຊົນເປັນກຸ່ມເປົ້າໝາຍສຸດທ້າຍທີ່ໄດ້ຮັບຜົນປະໂຫຍດຈາກທຸກວຽກງານການພັດທະນາ, ເຮັດ |

| | | | |
|---|---|---|---|
| | ສັງຄົມໃນຮູບແບບການພັດທະນາແບບຍືນຍົງແລະມີສ່ວນຮ່ວມ | | ແນວໃດການເຮັດວຽກຂອງນັກພັດທະນາຊຸມຊົນຫລືຄູຝຶກຈະສາມາດຕອບໂຈດຄວາມຕ້ອງການທີ່ແທ້ຈິງຂອງຊຸມຊົນໄດ້. ຊຸດອົບຮົມນີ້ເນັ້ນໃນການສ້າງຄວາມເຂົ້າບໍລິບົດ ແລະຄວາມຕ້ອງການຂອງຊຸມຊົນຢ່າງແທ້ຈິງ. |

*ວັນເວລາການອົບຮົມຢູ່ລະຫວ່າງການປະສານງານກັບວິທະຍາກອນຊຶ່ງອາດຈະມີການປ່ຽນແປງຕາມຄວາມເໝາະສົມ.*

## 2. ຊຸດເຝິກອົບຮົມການເປັນນັກບໍລິຫານອົງກອນ ແລະໂຄງການ

ເໝາະກັບບຸກຄະລາກອນທີ່ມີບົດບາດໃນດ້ານບໍລິຫານ ຫຼືເຮັດວຽກປະຈຳສຳນັກງານ ໂດຍຜູ້ເຂົ້າຮ່ວມຕ້ອງເລືອກເຂົ້າອົບຮົມໃຫ້ໄດ້ 3 ເນື້ອຫາວິຊາຈາກທັງໝົດ.

| ລ/ດ | ຫົວຂໍ້ເຝິກອົບຮົມ | ວັນທີ,ເດືອນ,ປີ | ແນະນຳການເຝິກອົບຮົມ |
|---|---|---|---|
| 1 | ການເຮັດວຽກເປັນໝູ່ຄະນະ | 27-31 ມີນາ 2014 (5ມື້) | ເນື້ອໃນດຽວກັບຊຸດການເປັນຄູເຝິກ1# |
| 2 | ວົງຈອນການບໍລິຫານໂຄງການ | 4-7 ມິຖຸນາ 2014 (4ມື້) | ສ້າງທິດທາງການເປັນຜູ້ບໍລິຫານໂຄງການທີ່ກໍໃຫ້ເກີດຍຸດທະສາດທີ່ມີພະລັງນຳໄປສູ່ການວາງແຜນການດຳເນີນງານທີ່ເປັນລະບົບ ມີບົດບາດຂອງຄະນະເຮັດວຽກທີ່ຊັດເຈນ ແລະອອກແບບລະບົບການຄຸ້ມຄອງທີ່ໜູນເສີມການຂັບເຄື່ອນຂອງຄົນເຮັດວຽກຕົວຈິງ. |
| 3 | ການຄຸ້ມຄອງການເງິນໂຄງການ | 6-9 ສິງຫາ 2014 (4ມື້) | ວາງແຜນລາຍຮັບແລະໃຊ້ຈ່າຍທີ່ຊັດເຈນເໝາະສົມກັບວຽກທີ່ຈະເຮັດແລະກຳລັງເຮັດ ໃຊ້ງົບປະມານທີ່ຖືກກັບເປົ້າໝາຍ ລາຍງານຄືນແບບໂປງໃສສາມາດກວດສອບໄດ້. |

*ວັນເວລາການອົບຮົມຢູ່ລະຫວ່າງການປະສານງານກັບວິທະຍາກອນຊຶ່ງອາດຈະມີການປ່ຽນແປງຕາມຄວາມເໝາະສົມ.*

## 3. ຊຸດອົບຮົບການຮຽນຮູ້ທົ່ວໄປ

ເປີດໃຫ້ທຸກຄົນທີ່ສົນໃຈຢາກຮຽນຮູ້ຕົນເອງ,ຄົນອ້ອມຂ້າງ ແລະສັງຄົມ ໄດ້ສະໝັກເຂົ້າຮ່ວມອົບຮົມໄດ້ຕາມຄວາມສົນໃຈ ແລະໃນຊຸດອົບຮົມນີ້ແມ່ນໄດ້ເສຍຄ່າໃຊ້ຈ່າຍຮ່ວມກັນ, ຫົວຂໍ້ການເຝິກອົບຮົມທີ່ເປີດທົ່ວໄປສະເພາະປີ 2014 ມີດັ່ງນີ້:

| ລ/ດ | ຫົວຂໍ້ເຝິກອົບຮົມ | ວັນທີ,ເດືອນ,ປີ | ແນະນຳການເຝິກອົບຮົມ |
|---|---|---|---|
| 1 | ການສື່ສານເພື່ອສານສຳພັນ | 15-17 ພຶດສະພາ 2014 | ສີລະປະແຫ່ງການສື່ສານໃຫ້ເກີດຄວາມເຂົ້າໃຈ ແລະຄວາມຮັກໃນຕົນເອງແລະຜູ້ອື່ນ ອີກທັງວິທີທາງໃນການເຝິກພັດທະນາຊີວິດແລະການຢູ່ຮ່ວມກັນຢ່າງມີສຸກດ້ວຍຫົວໃຈທີ່ເປີດກ້ວາງໃນຄວາມຮັບຮູ້ແລະຄວາມຮູ້ສຶກ ແລະການເຂົ້າເຖິງຄວາມຕ້ອງການຂອງການສະແດງອອກ. |
| 2 | ພະເຊີນຄວາມຕາຍຢ່າງສະຫງົບ | ກໍລະກົດ ຫລື ຕຸລາ 2014 | ຮຽນຮູ້ ແລະຕຽມຄວາມພ້ອມທຸກລົມຫາຍໃຈເມື່ອຄວາມຕາຍເຂົ້າໃກ້ໂຕຂອງເຮົາ ຫລືຄົນທີ່ເຮົາຮັກ ຫລືຄົນ |

| | | | |
|---|---|---|---|
| | | | ທີ່ເຮົາຮູ້ຈັກ ຈະມີວິການແນວໃດເພື່ອໃຫ້ຄົນທີ່ຢູ່ໄດ້ເຂົ້າແລະຄົນທີ່ໄປໄດ້ເດີນທາງຢ່າງສະຫງົບ. |
| 3 | ຫລັກພາວະນາປະຕິບັດ | ພະຈິກ 2014 (4ວັນ) | ການພາວະນາຫລືສະມາທິເປັນພື້ນຖານຂອງການມີຊີວິດທີ່ອຸດົມ. ລົມຫາຍໃຈ, ຮ່າງກາຍ ທີ່ເປັນຂອງເຮົາມັນແມ່ນແທ້ບໍ່ວ່າມັນແມ່ນຂອງເຮົາແມ່ນຫລືບໍ່ແມ່ນບໍ່ສຳຄັນແຕ່ສຳຄັນກວ່ານັ້ນຄືເຮົາເອົາໃຈໃສ່ເບິ່ງແຍງ,ຮັບຟັງ,ສຳຜັດກັບມັນຫລາຍປານໃດ. |

*ວັນເວລາການອົບຮົມຢູ່ລະຫວ່າງການປະສານງານກັບວິທະຍາກອນຊຶ່ງອາດຈະມີການປ່ຽນແປງຕາມຄວາມເໝາະສົມ.*

## 4. ຊຸດອົບຮົມ: ການເປັນຜູ້ນໍາພາການຮຽນຮູ້ໃນຊຸມຊົນແບບມີສ່ວນຮ່ວມໂດຍຄົນຮຸ່ນໃໝ່:

ຫລັກສູດນີ້ອອກແບບຂຶ້ນມາເພື່ອຝຶກໄວໜຸ່ມ,ອາສາສະໝັກ ຫລືຄົນຮຸ່ນໃໝ່ທີ່ສົນໃຈຢາກຮຽນຮູ້ການ ເຮັດວຽກພັດທະນາໃນຊຸມຊົນແບບມີສ່ວນຮ່ວມ, ເປັນຫລັກສູດທີ່ຊ່ວຍຕຽມຄວາມພ້ອມກ່ອນການເຮັດວຽກຕົວ ຈິງກັບອົງກອນເອກະຊົນ, ພາກລັດ ແລະ ອົງການຈັດຕັ້ງສາກົນທົ່ວໄປ. ໃນຫລັກສູດນີ້ທາງອົງກອນ ຫລືຫ້ອງການໃດທີສົນໃຈຢາກສົ່ງພະນັກງານໜຸ່ມນ້ອຍ,ອາສາສະໝັກເຂົ້າຮ່ວມແມ່ນພວກເຮົາຈະໄດ້ເກັບຄ່າ ເຂົ້າຮ່ວມແລະຈະຕ້ອງໄດ້ສ້າງຂໍ້ຕົກລົງກັບຜູ້ເຂົ້າຮ່ວມໃນການໃຫ້ຄໍາໝັ້ນສັນຍາວ່າຈະເຂົ້າຮ່ວມຈົນຈົບຫລັກສູດ. ໂດຍໃນຫລັກສູດນີ້ມີທັງໝົດ 4ຫົວຂໍ້ຄື:

| ລ/ດ | ຫົວຂໍ້ຝຶກອົບຮົມ | ວັນທີ,ເດືອນ,ປີ | ແນະນໍາການຝຶກອົບຮົມ |
|---|---|---|---|
| 1 | ຈິດອາສາ ແລະ ການເຮັດວຽກເປັນທີມ | ມີນາ 2014 (4ວັນ) | ການຊ່ວຍເຫຼືອເຊິ່ງກັນ ແລະ ກັນເປັນຄໍາເວົ້າທີ່ຕິດປາກຂອງຄົນລາວເຮົາແຕ່ແນວໃດຈິ່ງຈະເຮັດໃຫ້ທັງຜູ້ຊ່ວຍ ແລະຜູ້ຖືກຊ່ວຍຮູ້ສຶກດີຕໍ່ກັນ ຊຸດອົບຮົມນີ້ ເປັນການຝຶກຕົນເອງໃຫ້ມີຈິດໃຈອາສາຢູ່ສະເໝີໃນຫຼັກສູດນີ້ຜູ້ເຂົ້າຝຶກຈະໄດ້ປະຕິບັດຕົວຈິງໃນການຊ່ວຍເຫຼືອສັງຄົມ ຫຼືຊຸມຊົນໃນຫຼາຍຮູ້ແບບທີ່ເຮັດໃຫ້ທ່ານຮູ້ສຶກປະທັບໃຈໃນນໍ້າໃຈຂອງຕົນເອງ. |
| 2 | ການພັດທະນາຊຸມຊົນແບບມີສ່ວນຮ່ວມ ແລະຍືນຍົງ | ພຶດສະພາ 2014 (4ວັນ) | ຫົວຂໍ້ຝຶກນີ້ ຈະໃຫ້ຜູ້ເຂົ້າຮ່ວມໄດ້ເຫັນເຖິງສິ່ງສໍາຄັນຂອງການເຮັດວຽກຊຸມຊົນ, ຄວາມສໍາຄັນຂອງບັນດາຜູ້ຮ່ວມງານ ແລະຊຸມຊົນໃນການພັດທະນາແບບຢ່າງ. ປະເດັນຫຼັກໃນການຝຶກອົບຮົມນີ້ແມ່ນຮູບການສົນທະນາ ແລະນໍາສະເໜີເນື່ອງຈາກຂະບວນການການມີສ່ວນຮ່ວມໃນຊຸມຊົນ ແມ່ນເນັ້ນໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາຊຸມຊົນຂອງເຂົ້າເຈົ້າເອງ |
| 3 | ຜູ້ນໍາພາກິດຈະກໍາໃນຊຸມຊົນແບບມີສ່ວນຮ່ວມ | ສິງຫາ 2014 (4ວັນ) | ພື້ນຖານເຕັກນິກທີ່ສໍາຄັນຂອງການນໍາພາກິດຈະກໍາເດັກແລະຊຸມຊົນແມ່ນການຮຽນຮູ້ທີຈະນໍາໃຊ້ອຸປະກອນແລະສິ່ງທີ່ມີຢູ່ໃກ້ຕົວເອົາມາປະຍຸກໃຊ້ໃນກິດຈະກໍາ, ໃນຊຸດອົບຮົມນີ້ທ່ານ |

| | | | |
|---|---|---|---|
| | | | ສາມາດເລືອກບາງເຕັກນິກທ່ານສົນ ໃຈທີ່ຈະລົງເລິກແລະຮຽນຮູ້ແບບຈິງຈັງໂດຍຜ່ານການເຮັດຕົວຈິງ ແລະທົດສະດີພື້ນຖານ. |
| 4 | ການອອກແບບ ແລະການບໍລິຫານໂຄງການຍ່ອຍ | ຕຸລາ 2014 (4ວັນ) | ຫົວຂໍ້ນີ້: ແມ່ນຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ເລື່ອງການຂຽນແຜນກິດຈະກຳໂຄງການຍ່ອຍພ້ອມທັງໄດ້ປະຕິບັດວຽກຕົວຈິງແບບຄົບວົງຈອນ(ການຄຸ້ມຄອງແລະການບໍລິຫານໂຄງການແບບມີສ່ວນຮ່ວມ) ເກີດມີຄວາມຮູ້ໃໝ່ສຳຫລັບຕົນ.ແຕ່ລະຄົນຈະຕ້ອງມີໂຄງການທີ່ເຮັດຮ່ວມກັບຊຸມຊົນ ເປັນຂອງຕົນເອງ |

**ວັນເວລາການອົບຮົມຢູ່ລະຫວ່າງການປະສານງານກັບວິທະຍາກອນຊຶ່ງອາດຈະມີການປ່ຽນແປງຕາມຄວາມເໝາະສົມ.*

## 5. ຫົວຂໍ້ເຝິກອົບຮົມທີ່ເປີດໃຫ້ບໍລິການສຳລັບພາຍໃນອົງກອນຫລືກຸ່ມຄົນ:

ສາມາດຕິດຕໍ່ຫົວຂໍ້ທີ່ທ່ານສົນໃຈໄດ້ເພື່ອໄປຈັດອົບຮົມໃຫ້ສະເພາະອົງກອນຕາມຊ່ວງໄລຍະເວລາທີ່ສະດວກໂດຍທາງອົງກອນທີ່ຕິດຕໍ່ເປັນຜູ້ອອກຄ່າໃຊ້ຈ່າຍທັງໝົດ ຫົວຂໍ້ການເຝິກອົບຮົມທີ່ສາມາດຈັດໃຫ້ສະເພາະໃນປີ 2014 ມີດັ່ງນີ້:

| ລ/ດ | ຫົວຂໍ້ເຝິກອົບຮົມ | ລ/ດ | ຫົວຂໍ້ເຝິກອົບຮົມ |
|---|---|---|---|
| 1 | ການເຮັດວຽກເປັນໝູ່ຄະນະ | 7 | ການຄຸ້ມຄອງການເງິນໂຄງການ |
| 2 | ການດຳເນີນການສົນທະນາ | 8 | ທັກສະການຈັບປະເດັນ |
| 3 | ການຈັດຂະບວນການເຝິກອົບຮົມແບບມີສ່ວນຮ່ວມ | 9 | ການສື່ສານເພື່ອສານສຳພັນ |
| 4 | ວົງຈອນການຄຸ້ມຄອງ-ບໍລິຫານໂຄງການ | 10 | ຈິດອາສາເພື່ອການພັດທະນາ |
| 5 | ຊຸມຊົນເປັນເຈົ້າການດ້ານສຸຂະອະນາໄມ (ຊຈສ) | 11 | ຫລັກພາວະນາປະຕິບັດ |
| 6 | ຜູ້ນຳພາກິດຈະກຳຊຸມຊົນແບບມີສ່ວນຮ່ວມ | | |

**ອົງການຜູ້ຈັດເຝິກອົບຮົມ:**

ສູນຮຽນຮູ້ສວນໄມ້ລາວ Souanmailao Eco-Forest Learning Centre (SML)

ສູນອົບຮົມຮ່ວມພັດທະນາ Participatory Development Training Centre (PADETC)

**ອົງການຮ່ວມຈັດເຝິກອົບຮົມ**

ເສມສິກຂາໄລ Spirit in Education Movement (SEM, Thailand)

ໂຄງການພຸດທະສາສະໜາເພື່ອການພັດທະນາ (ຄພພ)

**ສະໝັກເຂົ້າຮ່ວມການອົບຮົມ ຫລື ສົນໃຈສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່:**

ຜູ້ປະສານງານ: ນາງ ລຳເງິນ ມະນີວົງ

ໂທລະສັບ: 021 215909, 020 2246 6995

Email: lamnguen@padetc.org or suanmailao@padetc.org or padetc@padetc.org

Facebook: ສວນໄມ້ລາວ-Suanmailao, Website: www.padetc.org